ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ

ເລກທີ: 06652 /ຍທຂ.ກຂທ

ລົງວັນທີ: 01.04.2019.

# ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ
# ລະຫວ່າງ ກົມຂົວທາງ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

| ກົມຂົວທາງຮັບຜິດຊອບ | ພະແນກ ຍທຂ ແຂວງ ແລະ ນະຄອນຫລວງວຽງຈັນ ຮັບຜິດຊອບ |
|---|---|
| 1) ສ້າງແຜນຍຸດທະສາດ ການພັດທະນາໃນແຕ່ລະໄລຍະ ໃນຂອບເຂດທົ່ວປະເທດ, ພ້ອມທັງຂັ້ນແຜນກໍ່ສ້າງ, ປັບປຸງຍົກລະດັບ, ບູລະນະຮັກສາ ແລະ ສ້ອມແປງ ບັນດາເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ; | 1) ຈັດຕັ້ງ ແລະ ເຜີຍແຜ່ຂະຫຍາຍບັນດາກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງແນະນຳ, ກົດລະບຽບ, ຂໍ້ກຳນົດ, ມາດຕະຖານເຕັກນິກ ແລະ ກຳນົດໝາຍລາຄາຫົວໜ່ວຍ ຕາມສູດຄິດໄລ່ລາຄາຫົວໜ່ວຍ ຂອງກະຊວງ ຍທຂ ວາງອອກ; |
| 2) ສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງຂະແໜງການ ທີ່ເຫັນວ່າຍັງຈຳເປັນ ແລະ ຍັງອັດຕັນ ເພື່ອໃຫ້ສອດຄ່ອງຕາມທິດສາມສ້າງ; | 2) ຄົ້ນຄວ້າສ້າງແຜນ ແລະ ສ້າງແຜນຍຸດທະສາດ ທາງດ້ານການປັບປຸງຍົກລະດັບ ແລະ ບູລະນະຮັກສາຂົວທາງໃນຂອບເຂດແຂວງຂອງຕົນ ເປັນແຕ່ລະໄລຍະ ໂດຍອີງໃສ່ແຜນພັດທະນາເສດ ຖະກິດ-ສັງຄົມ ຂອງແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ກະຊວງ ຍທຂ; |
| 3) ສ້າງຄູ່ມື, ປຶ້ມແນະນຳ ແລະ ຈັດຝຶກອົບຮົມ ກ່ຽວກັບການນຳໃຊ້ສູດຄິດໄລ່ລາຄາຫົວໜ່ວຍ, ກຳນົດໝາຍເຕັກນິກ, ມາດຖານເຕັກນິກ ແລະ ລະບຽບການປະມູນ (ເປັນພາສາລາວ) ໃຫ້ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ; | 3) ສ້າງບົດສະເໜີໂຄງການ ທີ່ຕິດພັນກັບທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ ແລະ ທາງຊົນນະບົດ ພາຍໃນແຂວງຂອງຕົນ ເພື່ອຄົ້ນຄວ້າ ແລະ ຊອກແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ; |
| 4) ປັບປຸງມາດຖານເຕັກນິກ ການສຳຫຼວດ-ອອກແບບ ກິດຈະການທາງຫຼວງໃນຂອບເຂດທົ່ວປະເທດ; | 4) ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ, ເຈລະຈາ ແລະ ຈັດຕັ້ງປະຕິບັດທຸກໆໂຄງການກໍ່ສ້າງ ແລະ ສ້ອມແປງຂົວທາງ ປະເພດທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ, ທາງຊົນນະບົດ ແລະ ທາງສະເພາະ ດ້ວຍງົບປະມານການລົງທຶນຂອງລັດ, ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຂອງອົງການຈັດຕັ້ງສາກົນ ຫຼືຈາກຕ່າງປະເທດ ທີ່ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຊອກຫາມາໄດ້ຕາມການມອບໝາຍ ຈາກກະຊວງ ຍທຂ ແລະ ລັດຖະບານ; |
| 5) ຄົ້ນຄວ້າຊອກຫາແຫຼ່ງທຶນ, ຂົນຂວາຍ ແລະ ປະສານສົມທົບກັບຜູ້ໃຫ້ທຶນທັງພາຍໃນ ແລະ ສາກົນ ເພື່ອມາພັດທະນາວຽກງານໃນຂົງເຂດຂົວທາງ; | 5) ຢັ້ງຢືນຮັບຮອງເອົາການສຳຫຼວດ-ອອກແບບ ມູນຄ່າໂຄງການກໍ່ສ້າງ ຫຼື ສ້ອມແປງລະບົບທາງຫຼວງແຂວງ ທີ່ຕິດພັນກັບທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ, ທາງຊົນນະບົດ ແລະ ທາງສະເພາະ, ໂດຍຖືກຕ້ອງຕາມລະບຽບການ, ມາດຕະຖານເຕັກນິກ ແລະ ສູດຄິດໄລ່ລາຄາຫົວໜ່ວຍ ຂອງກະຊວງ ຍທຂ; |

| | |
|---|---|
| 6) ເປັນເຈົ້າການໃນການຕິດຕາມກວດກາ ນັບທັງສ້າງກົນໄກຕ່າງໆ ເພື່ອຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ວຽກງານຂົວທາງ ຂອງພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະ ຄວາມໂປ່ງໃສ ໂດຍອີງຕາມມາດຖານເຕັກນິກ, ກຳນົດໝາຍເຕັກນິກ, ລາຄາ ຫົວໜ່ວຍ ຕາມສູດຄິດໄລ່ຂອງກະຊວງ ຍທຂ ວາງອອກ, ນັບທັງລະບຽບ ການອື່ນໆ ແລະ ທັງເປັນຜູ້ອະນຸມັດ ທຸກການປ່ຽນແປງທາງດ້ານເຕັກນິກ ສຳລັບທາງຫຼວງແຫ່ງຊາດ; | 6) ຕິດຕາມ, ກວດກາ, ຊຸກຍູ້ການກໍ່ສ້າງ, ສ້ອມແປງ ແລະ ບູລະນະຮັກສາຂົວ ທາງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; |
| 7) ເປັນເຈົ້າການໃນການປະມູນຈັດຊື້-ຈັດຈ້າງ ຫຼືເຈລະຈາ ແລະ ຈັດຕັ້ງປະຕິບັດ ທຸກໆໂຄງການກໍ່ສ້າງ ແລະ ສ້ອມແປງຂົວທາງ ຢູ່ໃນຂອບເຂດທົ່ວປະເທດ ທີ່ ຕິດພັນກັບທາງຫຼວງແຫ່ງຊາດ; | 7) ຄຸ້ມຄອງ ແລະ ອະນຸຍາດດຳເນີນທຸລະກິດຂົວທາງ ໃນແຕ່ລະປີ ໃຫ້ບັນດາ ບໍລິສັດ ທີ່ຢູ່ພາຍໃນແຂວງຂອງຕົນ; |
| 8) ຢັ້ງຢືນຮັບຮອງເອົາການສຳຫຼວດ-ອອກແບບ ມູນຄ່າໂຄງການກໍ່ສ້າງ ຫຼື ສ້ອມແປງຂົວທາງ ທີ່ຕິດພັນກັບທາງຫຼວງແຫ່ງຊາດ ຫຼືປະເພດທາງທີ່ມີ ມາດຖານເຕັກນິກສູງກວ່າ ເຊັ່ນ: ທາງດ່ວນເປັນຕົ້ນ. ກວດກາ, ຕິດຕາມ, ໃຫ້ ທິດຊີ້ນຳ ແລະ ໃຫ້ຄຳແນະນຳ ໃນການຈັດຕັ້ງປະຕິບັດວຽກງານ ສຳຫຼວດ-ອອກແບບ, ຢັ້ງຢືນຮັບຮອງແບບ ແລະ ມູນຄ່າຂອງໂຄງການ ທີ່ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ ເປັນປະຈຳ. ນອກຈາກ ນັ້ນ ຕ້ອງຝຶກອົບຮົມບຸກຄະລາກອນ ແລະ ວິຊາການພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອຍົກລະດັບຄວາມຮູ້ຄວາມສາມາດ ໃນການ ກວດກາ ແລະ ຮັບຮອງແບບແຕ້ມເຕັກນິກ ແລະ ມູນຄ່າຂອງໂຄງການ. | 8) ເກັບກາສະຖິຕິເສັ້ນທາງ, ຂົວ, ທໍ່ລະບາຍນ້ຳ ແລະ ອື່ນໆ ທັງໝົດໃນຂອບເຂດ ແຂວງຂອງຕົນ ເພື່ອລາຍງານໃຫ້ ກົມຂົວທາງເປັນປົກກະຕິ; |
| | 9) ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານໃຫ້ ເຈົ້າແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ກະຊວງ ຍທຂ ປະຈຳເດືອນ, ງວດ ແລະ ປີ. |

ຫົວໜ້າກົມ ຂົວທາງ

ແພງ ດວງເງິນ

ຫົວໜ້າພະແນກ

ຫົວໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ: ........................................

ຫົວໜ້າພະແນກ ຍທຂ ແຂວງ ຜົ້ງສາລີ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງນ້ຳທາ : ....................................

ຫົວໜ້າພະແນກ ຍທຂ ແຂວງ ອຸດົມໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍ່ແກ້ວ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງພະບາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຊຽງຂວາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫົວພັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊຍະບູລີ : ....................................

ຫົວໜ້າພະແນກ ຍທຂ ແຂວງ ວຽງຈັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊສົມບູນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍລິຄຳໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຄຳມ່ວນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ສະຫວັນນະເຂດ: ..................................

ຫົວໜ້າພະແນກ ຍທຂ ແຂວງ ຈຳປາສັກ : ..................................

ຫົວໜ້າພະແນກ ຍທຂ ແຂວງ ສາລະວັນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ເຊກອງ : ..................................

ຫົວໜ້າພະແນກ ຍທຂ ແຂວງອັດຕະປື : ..................................